# ສະບາຍດີປີໃຫມ່

| | | |
|---|---|---|
| ພໍເມື່ອ | ສອງພັນສີ່ເລີຍລ່ວງຍ້າຍ | ກາຍຈາກລາງເລືອນ |
| | ສິບສອງເດືອນຈວນຈົບ | ຄົບຮອບວົງຈອນດັ້ນ |
| | ຄືກັນກັບກົງຈັກກິ້ງ | ຫມູນໄປບໍ່ຫວນຈອດ |
| | ຮອດບ່ອນຄົບຮອບບັ້ນ | ສອງພັນຫ້າ ກໍປ່ຽນແທນ ແທ້ໃດ |
| ເຮົາໄດ້ | ຈົດໃສ່ໃຈຝັງແຫນ້ນ | ສອງພັນສີ່ມີຄວາມຫມາຍ |
| | ເຮັດໃຫ້ສິດຫຼັກເຈັດ | ສືບຂ່າວຄາວກັນຮູ້ |
| | ກັບທັງຄຣູອາຈານພ້ອມ | ຢູ່ແດນໃດໄດ້ຕິດຕໍ່ |
| | ສືບທວງທາວກັນພົບພໍ້ | ມີສຸຂລົ້ນຊື່ນໃຈ ດີແລ້ວ |
| ໃນເມື່ອ | ປີເກົ່າເລີຍເຄື່ອນຍ້າຍ | ເປັນປີໃຫມ່ຫມູນວຽນມາ |
| | ສອງພັນຫ້າທີ່ຄອຍລໍ | ກໍດ່ວນມາເຖິງແລ້ວ |
| | ແນວເຮົາມີໃຈຕັ້ງ | ຮວມສັງສັນສິດຄຣູເກົ່າ |
| | ພວກເຮົາຄົງຈາຣຶກໄວ້ | ສອງພັນຫ້າ ບໍ່ອາດລືມ ແທ້ແລ້ວ |
| ບັດນີ້ | ນິຣາວັນຂໍເລີ້ມຕົ້ນ | ຝາກຄໍາອ່ວຍພອນຊັຍ |
| | ແດ່ເພື່ອນຄຣູຫຼັກເຈັດ | ທຸກເຂດແດນໄກໃກ້ |

| | |
|---|---|
| ຂໍໃຫ້ມີສຸຂລົ້ນ | ໂພຍພັຍມານຢ່າບັງບຽດ |
| ຄວາມຄຽດຂົມເຄີຍພົບພໍ້ | ໃຫ້ຫນີມົ້ມຈືດຈາງ ແດ່ທ້ອນ |
| ອັນຫນຶ່ງ ກັບທັງພັຍພະຍາດຮ້າຍ | ຈົ່ງຫາຍຂາດໄຄແຄນ |
| ແມ່ນເຄີຍມີມານານ | ໃຫ້ຈືດຈາງແລ້ວຫາຍຊື້ນ |
| ຊັພສິນເງິນໃຫ້ຫາໄດ້ | ຫຼັ່ງໄຫຼມາຢ່າເຂີນຂາດ |
| ປາຖນາທຸກສິ່ງໄວ້ | ຈົ່ງສົມແມ້ງດັ່ງປະສົງ ແມ່ທ້ອນ |
| ພ້ອມທັງ ຂໍເພື່ອນຄຣູທຸກທົ່ວຫນ້າ | ຈົ່ງມີແຕ່ຄວາມສຸຂຂີ |
| ຕລອດປີຫາຍໂພຍພັຍ | ໂຣຄມານຢ່າມາຕ້ອງ |
| ຢ່າມີຫມອງໃຈເສົ້າ | ຄວາມເຫງົາໃຈໃຫ້ຫນີຫ່າງ |
| ທາງຊີວິດໃຫ້ຣາບຮື້ນ | ມີສຸກລົ້ນລື່ນປະມານ ສາທຸ |
| ຂໍໃຫ້ ຄຣູອາຈານເອື້ອຍອ້າຍ | ສຸຂພາບທັງກາຍໃຈ |
| ມີພະລານາມັຍ | ເຂັ້ມແຂງຫມັ້ນແຮງກ້າ |
| ທັງຄອບຄົວເຮືອນຊານພ້ອມ | ຄອງຄວາມສຸຂຂື້ນຍິ່ງ |
| ທຸກສິ່ງຝັນໂຊກລາພໄດ້ | ສົມຫວັງລ້ວນທຸກອັນ ແດ່ເນີ... |
| ທ້າຍນີ້ ເຮົາຈິ່ງຂໍຮຽກເອີ້ນ | ຊວນເຊີນເພື່ອນທັງຫຼາຍ |

ເອື້ອຍອ້າຍຄຣູອາຈານ　　　ມາຮ່ວມກັນ  ດັ່ງຫມາຍໄວ້

ຈາກກັນໄກມານານລ້ຳ　　　ໄລລາຫນີໄກຫ່າງ

ຫາທາງມາຮ່ວມໃຫ້ໄດ້　　　ສຸຂໃຈແມ້ງເມື່ອພົບກັນ    ຈິງແລ້ວ

ຂໍໃຫ້　ເດືອນມີນາ  ສູນຫ້ານັ້ນ　　　ຈາຣຶກຮ່ຳໃນດວງຈິດ

ສິດອາຈານຄຣູຫູ້ກເຈັດ　　　ຢູ່ທົ່ວແດນໂລກາກວ້າງ

ມາສັງສັນຮວມກັນເຊົ້າ　　　ຈິດເອົາລົງປວັດສາດ

ສາມັກຄີຮັກທໍ່ຫຸ້ມ　　　ຕອມຕຸ້ມເຂົ້າຮ່ວມກັນ    (ດີຫຼາຍແລ້ວ)